ເສດໄມ້, ເສດເຈ້ຍອື່ນຍັງມີອີກຈຶ່ງຈຳເປັນຕ້ອງມີຂຸມຝັງສຳລັບຂີ້ເຫຍື້ອທີ່ຝັງໄດ້ຫຼືເຜົາໄດ້, ຄວນປະຕິບັດໃຫ້ຮຽບ ຮ້ອຍເພື່ອໃຫ້ບໍລິເວນຄ້າຍສະອາດ.

## VII. ຂໍ້ແນະນຳ

ຄວນມີການແຍກຂີ້ເຫຍື້ອໃນຄ້າຍພັກແຮມເພື່ອເປັນຕົວຢ່າງໃນການຮັກສາສິ່ງແວດລ້ອມ ເຮົາຄວນແຍກອອກເປັນ 2 ປະເພດຄື

- ຂີ້ເຫຍື້ອທີ່ນຳໄປ *recycle* ໄດ້.
- ຂີ້ເຫຍື້ອທີ່ນຳໄປຖິ້ມໂດຍການທີ່ຈະນຳໄປຝັງຫຼືເຜົາຫຼືອາດຈະແຍກເປັນ 4 ປະເພດແລ້ວນຳໄປວາງຈຸດຕ່າງໆແຕ່ລະຈຸດ








# ຄວາມຮູ້ກ່ຽວກັບ
# “ ອ.ຣ.ພ ”
# ການຕັ້ງຄ້າຍ

(ສະບັບທົດລອງ)

ຂຽນໂດຍ: ອຈ ທຸມພັນ ຄຳພະນີວົງ
ອຈ ບົວວັນ ສີດາລາ
ບັນນາທິການໂດຍ: ອຈ ໄພໄຊ ຈັນທະວົງສາ
ພິມ ແລະ ຈັດໜ້າໂດຍ: ນ ມະນີວັນ ສີພອນໄຊ
ອອກແບບໜ້າປົກໂດຍ: ທ ວັດທະນາ ສີວິໄຊ

ກົມພະລະ ແລະ ສິລະປະສຶກສາ
ຮ່ວມກັບ ສູນອົບຮົມຮ່ວມພັດທະນາ
ກະຊວງສຶກສາທິການ
2008

www.padetc.org

* ການປຸກຕັ້ງທີ່ພັກ:

ຕ້ອງສຳຫຼວດບໍລິເວນຕັ້ງຄ້າຍວ່າ: ມີປວກມົດຫຼືບໍ່ຖ້າມີຄວນຫຼີກລ່ຽງແຕ່ຖ້າຫຼີກລ່ຽງບໍ່ໄດ້ຄວນເອົາປູນຂາວໂຮຍເພື່ອປ້ອງກັນເມື່ອກາງເຕັ້ນແລ້ວຕ້ອງຂຸດຮ່ອງນ້ຳໃຫ້ຮຽບຮ້ອຍເພື່ອບໍ່ໃຫ້ນ້ຳໄຫຼເຂົ້າ ແລະ ກ້ອງບ່ອນນອນຄວນມີຜ້າປູກ່ອນ.

* ບ່ອນເຮັດອາຫານ

- ບ່ອນດັງໄຟຄວນພິຈາລະນາຕາມຄວາມເໝາະສົມຕ້ອງມີຂຸມຂີ້ເຫຍື້ອແຫ້ງ, ຂີ້ເຫຍື້ອປຽກ ຫຼື ຖົງຂີ້ເຫຍື້ອເວລາປິດຄ້າຍຄວນຖົມຂີ້ເຫຍື້ອທຸກຄັ້ງ.
- ບ່ອນລ້າງຖ້ວຍຈານຄວນເຮັດເປັນສາມຂາສຳລັບວາງຊາມໃສນ້ຳ ແລະຜ້າຂົນໜູແຂນໄວ້ສຳລັບເຊັດມື ຫຼື ຈັດແບບອື່ນກໍ່ໄດ້ແຕ່ໃຫ້ສະດວກ ແລະ ເປັນລະບຽບຮຽບຮ້ອຍ.
- ຜຽກຕາກເຄື່ອງຄວນຈັດຢູ່ໃນສະຖານທີ່ເໝາະສົມເຊັ່ນ: ຫ່າງໄກຄົວເຮືອນ ຫຼື ທາງຍ່າງ.
- ຫ້ອງຖ່າຍ ແລະ ບ່ອນອາບນ້ຳສິ່ງນີ້ນັບວ່າເປັນສິ່ງຈຳເປັນຫຼາຍໃນການຕັ້ງຄ້າຍພັກແຮມຫຼືໄລຍະສັ້ນ, ຫ້ອງຖ່າຍຄວນຂຸດດິນເປັນຂຸມໃຫຍ່ ແລະ ເລິກພໍກັບຈຳນວນຜູ້ໃຊ້, ຫ້ອງອາບນ້ຳ ຄວນເຮັດໃຫ້ຖືກຫຼັກສຸຂະລັກສະນະມີຮ່ອງລະບາຍນ້ຳອອກຢ່າໃຫ້ນ້ຳຂັງຢູ່.
- ບ່ອນໄວ້ຂີ້ເຫຍື້ອໃນບໍລິເວນຄ້າຍນອກຈາກຈະມີຂຸມປຽກ, ຂຸມແຫ້ງ ແລະ ຖົງຂີ້ເຫຍື້ອໃນເຮືອນຄົວ ແລ້ວ, ແຕ່ຍັງບໍ່ພຽງພໍສະເພາະ

**ຖືແກ່ດເຈ້ຍ ຫຼື ຖົງສໍາລັບ ໃສ່ອຸປະກອນໝູ່ໄປ**

ເພື່ອສະດວກໃນການເກັບມ້ຽນ, ຂົນສົ່ງໄປ ແລະ ຄວບຊຸມລາຍການອຸປະກອນ ແລະ ຊື່ໝູ່ໄວ້ໃນແກ່ດຫຼືຖົງອຸປະກອນພ້ອມ ເຊິ່ງຈະຊ່ວຍໃຫ້ສະມາຊິກໝູ່ ສາມາດທີ່ຈະຫາອຸປະກອນທີ່ຈະໃຊ້ງ່າຍຂຶ້ນ ແລະຈະຊ່ວຍເຕືອນໝູ່ເຮົາໄດ້ວ່າກຽມອຸປະກອນຕ່າງໆໄດ້ຄົບຫຼືບໍ່.

## Ø ສຸຂາພິບານຄ້າຍພັກແຮມ

ການສຸຂາພິບານຄ້າຍພັກແຮມແມ່ນການຈັດຄ້າຍພັກແຮມໃຫ້ຖືກສຸຂະລັກສະນະເພື່ອໃຫ້ສະມາຊິກຄ້າຍມີສຸຂະພາບອະນາໄມດີ ແລະ ສ້າງສຸຂະນິໄສທີ່ດີໃຫ້ແກ່ຊາວຄ້າຍນໍາອີກເຊິ່ງໝາຍເຖິງບ່ອນເຮັດອາຫານ, ບ່ອນໄວ້ຂີ້ເຫຍື້ອ, ການເກັບຂີ້ເຫຍື້ອ, ຕະຫຼອດຮອດຫ້ອງນໍ້າ, ຫ້ອງຖ່າຍ ແລະ ບໍລິເວນເຂົ້າຄ້າຍທົ່ວໄປສຸຂາພິບານຄ້າຍພັກແຮມນີ້ຫາກເປັນຄ້າຍທີ່ມີອາຄານຕ່າງໆແລ້ວ ກໍພຽງແຕ່ແບ່ງໜ້າທີ່ກັນຮັບຜິດຊອບເຮັດຄວາມສະອາດໃນແຕ່ລະວັນ.

ຖ້າຄ້າຍພັກແຮມເປັນໄລຍະສັ້ນ ຫຼື ຊົ່ວຄາວຕ້ອງສ້າງທີ່ພັກ ຫຼື ອໍານວຍຄວາມສະດວກເອງຈິ່ງຕ້ອງເພີ່ມຄວາມເອົາໃຈໃສເລື່ອງສຸຂາພິບານຄ້າຍຫຼາຍຂຶ້ນເຊິ່ງຈະຈັດສຸຂາພິບານຄ້າຍດັ່ງນີ້:



# ຄໍານໍາ

ປຶ້ມການຕັ້ງຄ້າຍເຫລັ້ມນີ້ແມ່ນໄດ້ມາຈາກການຂຽນຂອງຄະນະຮັບຜິດຊອບ ແລະ ໄດ້ຄັດຈ້ອນມາຈາກປຶ້ມຫລັກສູດ ອ.ຮ.ພ ທີ່ໄດ້ຮັບອະນຸມັດຈາກລັດຖະມົນຕີກະຊວງສຶກສາທິການ ຊຶ່ງຂຽນຂຶ້ນໂດຍມີຈຸດປະສົງໃຫ້ຄູເຝິກແລະ ຫົວໜ້າໝວດຂັ້ນພື້ນຖານແຕ່ລະພາກສ່ວນນໍາໄປເຝິກອົບຮົມ ແລະ ປະຕິບັດໃນຂອບເຂດທີ່ຕົນເອງຮັບຜິດຊອບ ຊຶ່ງເປັນການເສີມທັກສະໃຫ້ແກ່ຫົວໜ້າໝວດໃນການເຝິກອາສາສະໝັກ.

ຄະນະຈັດທໍາຄິດວ່າປຶ້ມເຫລັ້ມນີ້ຈະເປັນບ່ອນອີງໃຫ້ແກ່ຄູເຝິກແລະຫົວໜ້າໝວດໃນການເຝິກອາສາສະໝັກໃຫ້ໄດ້ດີຂຶ້ນ.

ພ້ອມກັນນີ້ຄະນະຈັດທໍາຕ້ອງຂໍອະໄພໃນສິ່ງທີ່ຂາດຕົກບົກຜ່ອງ ແລະ ຍິນດີຮັບຄໍາຕໍານິຕິຊົມຈາກທຸກໆທ່ານ.

ຄະນະຈັດທໍາ

# ສາລະບານ


ຫົວບົດ ໜ້າ

1. ຄວາມຮູ້ກ່ຽວກັບຄ້າຍ……………………………………………...…1
2. ຈຸດໝາຍ 3 ດ້ານໃນການຈັດຄ້າຍ …….........................………2
3. ກິດຈະກຳຂອງຄ້າຍ ອ.ຣ.ພ……………………………..………3
4. ສິ່ງທີ່ຄວນເອົາໃຈໃສ່ໃນການຈັດຄ້າຍ……………………...……4
5. ວິທີທັກສະຂອງຄ້າຍ ອ.ຣ.ພ……………………………..……5
6. ລັກສະນະຂອງຄ້າຍ ອ.ຣ.ພ……………………………...……6
7. ມາດຕະຖານທີ1 : ການສ້າງສາຍສຳພັນ……………………..……7
8. ມາດຕະຖານທີ2 : ການສ້າງຊາວຄ້າຍທີ່ດີ …………...…………8
9. ມາດຕະຖານທີ 3: ການສ້າງກຸ່ມທີ່ດີ.........................................9
10. ມາດຕະຖານທີ 4: ຮູບແບບການຈັດຄ້າຍ….......………………..10
11. ມາດຕະຖານທີ 5: ຮູບແບບການຈັດຄ້າຍ ……………….……11
12. ມາດຕາຖານທີ 6: ກິດຈະກຳທີ່ດີ……………………………..12
13. ມາດຕະຖານທີ 7: ຂະບວນການຈັດຄ້າຍທີ່ດີ…………………...13
14. ໂຄງຮ່າງການຈັດຕັ້ງຄ້າຍ…………………………..…………17
15. ຕາຕະລາງແຜນການຈັດຄ້າຍພັກແຮມ…………………………18
16. ສິ່ງທີ່ຄວນເອົາໃຈໃສ່ໃນການຈັດຄ້າຍ………………………...19
17. ອຸປະກອນທີ່ຄວນເອົາໄປນຳ…………………….…………....21
18. ສຸຂາພິບານຄ້າຍພັກແຮມ…………………………...………22
29. ການປຸກຕັ້ງທີ່ພັກ ແລະ ຂໍ້ແນະນຳ……………………………24




9. ຢາປະຈຳຕົວ ແລະ ຢາທາປ້ອງກັນຕ່າງຕ່າງເຊັ່ນ: ຢາມ່ອງ, ຢາຕິດບາດ.
10. ເຄື່ອງດົນຕີທີ່ຫຼິ້ນໄດ້ຄ່ອງແຄ້ວ, ເຄື່ອງມືທີ່ຈະເຮັດກິດຈະກຳທີ່ຕົນມີ ຫຼື ສາມາດໃຊ້ໄດ້.
11. ຜ້າເຊັດໂຕ, ຜ້າຫົ່ມ.
12. ເກີບສຳລັບຢູ່ຄ້າຍ, ເກີບແຕະຟອງນ້ຳ, ຖົງເທົ້າ.
13. ອຸປະກອນໃນການຫຍິບ ຫຼື ສ້ອມແຊມເສື້ອຜ້າ.
14. ປື້ມບັນທຶກ,ບິກ.

## Ø ອຸປະກອນຂອງໝູ່

ການວາງແຜນຮ່ວມກັນ ແລະ ໃຊ້ອຸປະກອນຂອງໝູ່ຈະຊ່ວຍໃຫ້ໝູ່ມີອຸປະກອນຕ່າງໆຕ້ອງໃຊ້ຮ່ວມກັນແລະບໍ່ເປັນພາລະທີ່ທຸກຄົນຈະຕ້ອງຖືມາຄືກັນອຸປະກອນຂອງໝູ່ຕ້ອງກຽມເຊັ່ນ

1 ອຸປະກອນເຄື່ອງຄົວເຊັ່ນ: ໝໍ້, ມີດເຮັດກິນ
2 ຕະກຽງອາດຈະເປັນຕະກຽງນ້ຳມັນ
3 ອາຫານແຫ້ງ
4 ຂວານ, ມີດ, ເລື່ອຍ
5 ຢາປະຈຳໝູ່ ແລະ ຖົງປະຖົມພະຍາບານ
6 ຖັງນ້ຳແລະກະຕິກນ້ຳ

## ອຸປະກອນທີ່ຄວນເອົາໄປນຳ

**Ø ຕ້ອງນຳອຸປະກອນຫຍັງໄປແດ່.**

ກ່ອນຈະຈັດອຸປະກອນຕ່າງໆ ສຳລັບໄປຄ້າຍພັກແຮມບໍ່ວ່າຈະເປັນເຄື່ອງສ່ວນຕົວຫຼືອຸປະກອນຂອງໝູ່ ຕ້ອງຖາມຕົວເອງກ່ອນວ່າຈະສາມາດແບກເຄື່ອງທັງໝົດໄດ້ບໍ່ໜັກເກີນໄປຫຼືບໍ່ສິ່ງຂອງທີ່ເອົາໄປນັ້ນເປັນສິ່ງຈຳເປັນທີ່ເຮົາຕ້ອງໃຊ້ຫຼືບໍ່ກວດກາສິ່ງຂອງຕ່າງໆທີ່ເຮົານຳໄປໂດຍຈົດລາຍການສິ່ງຂອງໄວ້ອຸປະກອນຕ່າງໆທີ່ກຽມໄວ້ຄວນບັນຈຸລົງກະເປົາເປ້ພາຍຫຼັງ ຮຽບຮ້ອຍເພື່ອສະດວກໃນການໃຊ້ກ່ອນ ຫຼື ຫຼັງຕົວຢ່າງອຸປະກອນເຄື່ອງໃຊ້ສ່ວນຕົວທີ່ຄວນນຳໄປມີ:

1. ເຄື່ອງແບບປົກກະຕິ 1 ຊຸດ
2. ເຄື່ອງແບບເຂົ້າຄ້າຍ 1 ຊຸດ (Camp uniform) ຄືໂສ້ງຂາຍາວສີດຳຫຼືສີຟ້າແກ່ 2 ໂຕ ແລະເສື້ອຍືດ ອ.ຣ.ພ 2 ໂຕ ໂສ້ງວອມເສື້ອວອມ ເສື້ອກັນຝົນຕາມລະດູການ
3. ຜ້າສິ້ນ 2 ຜືນເພື່ອປ່ຽນອາບນ້ຳ
4. ເສື້ອຊ້ອນ
5. ແປງສີພັນ.ຢາສີພັນ,ສະບູ,ໂອນ້ຳ,ຢາສະຫົວ,ຜ້າເຊັດໂຕ,ຜ້າເຊັດໜ້າ,ຫວີ
6. ໄຟສາຍ
7. ສ້ອມ,ບ່ວງ,ຈອກນ້ຳ,ຈານ
8. ມີດພັບ,ໝາກຫວິດ,ເຊືອກ.



## ຄວາມຮູ້ກ່ຽວກັບຄ້າຍ

I. ຄ້າຍແມ່ນຫຍັງ?

ຄ້າຍແມ່ນການມາເຕົ້າໂຮມກັນເພື່ອເຮັດກິດຈະກຳໃດໜຶ່ງເນັ້ນໂດຍການຢູ່ຮ່ວມກັນ, ການເຝິກອົບຮົມຫົວຂໍ້ໃດໜຶ່ງຕະຫລອດເຖິງການແລກປ່ຽນຮຽນຮູ້ນຳທາງດ້ານຕ່າງໆ.

II. ຄ້າຍພັກແຮມແມ່ນຫຍັງ?

ຄ້າຍພັກແຮມໝາຍເຖິງການນຳເອົາຊາວຄ້າຍນອນເຮັດກິດຈະກຳຄ້າງຄືນຢູ່ສະຖານທີ່ແຫ່ງໃດໜຶ່ງເຊິ່ງເຂົາເຈົ້າຈະໄດ້ພະຈົນໄພກັບຊີວິດທີ່ແຕກຕ່າງກັບເວລາຢູ່ເຮືອນຂອງຕົນເຊັ່ນ: ການນອນໃນເຕັ້ນ, ການໃຊ້ພື້ນສະໜາມຫຼຸງເຂົ້າ, ການເດີນທາງໄກ, ບັນຍາກາດຮ່ວມກັນເວລາຫລິ້ນອ້ອມກອງໄຟ.

III. ຈຸດປະສົງຂອງການຈັດຄ້າຍ ອ.ຣ.ພ

ເພື່ອໃຫ້ຊາວຄ້າຍໄດ້ແລກປ່ຽນຮຽນຮູ້ເຊັ່ນ: ທາງດ້ານວັດທະນະທຳ, ພາສາປາກເວົ້າ, ການປະຕິບັດກິດຈະກຳຕ່າງໆ.

- ເພື່ອໃຫ້ຊາວຄ້າຍໄດ້ຄົ້ນພົບຄວາມສາມາດຂອງຕົນເອງ
- ເພື່ອເຝິກການເປັນຜູ້ນຳຜູ້ຕາມ
- ເພື່ອໃຫ້ຊາວຄ້າຍເຝິກທັກສະຕ່າງໆ. ການໃຊ້ຊີວິດຕິດພັນກັບທຳມະຊາດ, ມີຄວາມກ້າຫານ, ອົດທົນ ແລະຮູ້ຈັກໝູນໃຊ້ທຳມະຊາດມາຮັບໃຊ້ຊີວິດປະຈຳວັນ

- ເພື່ອເຝິກຊາວຄ້າຍໃຫ້ມີລະບຽບວິໄນ ແລະ ການຢູ່ຮ່ວມກັນຕາມລະບົບໝວດໝູ່.

## ຈຸດໝາຍ 3 ດ້ານຂອງການຈັດຄ້າຍ

1. ຊາວຄ້າຍຕ້ອງໄດ້ຮັບການພັດທະນາທາງດ້ານຈິດໃຈເຊັ່ນ: ອາລົມຕ້ອງເບີກບານແຈ່ມໃສ, ຈິດໃຈຕ້ອງຮູ້ໃຫ້ອາໄພເຊິ່ງກັນແລະກັນ, ມີການອານຸໂລມຜ່ອນສັ້ນຜ່ອນຍາວເສຍສະຫຼະເອື້ອອາທອນເຫຼົ່ານີ້ເປັນຕົ້ນ.
2. ຊາວຄ້າຍຕ້ອງໄດ້ຮັບການພັດທະນາທາງດ້ານຄວາມຮູ້ຄວາມສາມາດ ແລະ ເຝິກທັກສະການເປັນຜູ້ນຳພາກິດຈະກຳ.
3. ຊາວຄ້າຍຕ້ອງໄດ້ຮັບການພັດທະນາທາງດ້ານຮ່າງກາຍເຊັ່ນ: ການທີ່ຊາວຄ້າຍໄດ້ຮັບອາຫານຄົບ 5 ໝູ່ ຕາມໂພຊະນາການ, ການອອກກຳລັງກາຍຢ່າງເໝາະສົມຕະຫຼອດເຖິງໂມງພັກຜ່ອນຂອງຊາວຄ້າຍຕ້ອງສົມດູນ.



Ø 2 ອາທິດກ່ອນເຂົ້າຄ້າຍ
- ຈອງລົດຫຼື ມີບາງຄົນອາດໃຫ້ຜູ້ປົກຄອງໄປສົ່ງ
- ສ່ວນລາຍການເຄື່ອງໃຊ້ສ່ວນຕົວທີ່ຕ້ອງກຽມໄປ, ແບບຟອມໃບອະນຸຍາດຈາກຜູ້ປົກຄອງໃນກໍລະນີເກີດເຫດສຸກເສີນລາຍລະອຽດເລື່ອງພາຫະນະການເດີນທາງຂອງເດັກຢ່າງເໝາະສົມ.
- ຊື້ອາຫານແຫ້ງ,ອະນາໄມສະຖານທີ່, ອຸປະກອນ ແລະ ເຄື່ອງໃຊ້ໃນການປະດິດທີ່ຍັງບໍ່ຄົບ
- ເຮັດໂປສເຕີ້

Ø 1 ອາທິດກ່ອນເຂົ້າຄ້າຍ
- ພົບຜູ້ປົກຄອງເພື່ອອະທິບາຍລະອຽດທີ່ຜູ້ປົກຄອງຕ້ອງການຮັບຮູ້.
- ສັ່ງອາຫານປະເພດຜັກ,ໝາກໄມ້ໃຫ້ສົ່ງໄປຄ້າຍ ຫລື ສັ່ງໄວ້ເພື່ອໄປຮັບຕອນເຊົ້າ.

Ø 3 ວັນກ່ອນເຂົ້າຄ້າຍ
- ຖ້າມີອາຫານທີ່ຈະປຸງແຕ່ງກ່ອນເຂົ້າຄ້າຍກໍຕ້ອງຈັດການຊື້ໃຫ້ທັນ.

Ø ມື້ເຂົ້າຄ້າຍ
- ມາຮອດຄ້າຍກ່ອນສະມາຊິກ ຫລື ຖ້າເປັນໄປໄດ້ຕ້ອງໄປພ້ອມກັບສະມາຊິກເຂົ້າຄ້າຍໃນລົດຄັນດຽວກັນ.

## ຕາຕະລາງການແຜນການຈັດຄ້າຍພັກແຮມ

Ø 1 ເດືອນກ່ອນການເຂົ້າຄ້າຍ

- ຈອງສະຖານທີ່ເຂົ້າຄ້າຍເຮັດຕາຕະລາງປະຊຸມກັນຄະນະເຮັດວຽກ.
- ເອີ້ນສະມາຊິກປະຊຸມເພື່ອເກັບກຳຂໍ້ມູນກ່ຽວກັບອາຫານ, ຫົວຂໍ້ການເຂົ້າຄ້າຍ
- ປະຊຸມອອກຄວາມຄິດຄວາມເຫັນກັບຜູ້ປະສານງານແລະຝ່າຍກິດຈະກຳໃຫ້ແທດເໝາະກັບລະດັບອາຍຸ.
- ເຮັດບົດບັນທຶກທີ່ສາມາດເຮັດໄດ້ໃນທີ່ປະຊຸມນັ້ນກ່ອນການເຂົ້າຄ້າຍ.

Ø 3 ອາທິດກ່ອນການເຂົ້າຄ້າຍ

- ຂື້ນງົບປະມານກ່ຽວກັບອາຫານ,ສິ່ງປະດິດ, ການພະຍາບານ, ອຸປະກອນ ແລະ ພາຫະນະ
- ສົ່ງຈົດໝາຍເຖິງຜູ້ປົກຄອງພ້ອມໃບເຊັນອະນຸຍາດຂອງຜູ້ປົກຄອງ ແລະ ຂໍ້ມູນຕ່າງໆໃຫ້ຜູ້ປົກຄອງຮັບຮູ້
- ເລີ່ມຊື້ອຸປະກອນທີ່ຈະມານຳໃຊ້ໃນງານປະດິດ, ເມື່ອມີການປ່ຽນແປງຈະໄດ້ນຳມາໃຊ້ທັນເວລາ.



## IV. ກິດຈະກຳຂອງຄ້າຍ ອຣພ

1. ເຮັດໃຫ້ເປົ້າໝາຍສຳເລັດຜົນດ້ວຍຮູບແບບຂອງກິດຈະກຳ
2. ຖືກກັບຄວາມຕ້ອງການຂອງຊາວຄ້າຍ (ຖືກຫົວຂໍ້ຄ້າຍ) ທຸກຄົນໄດ້ມີສ່ວນຮ່ວມ.
3. ໃຊ້ສະຖານທີ່, ວັດຖຸອຸປະກອນໃຫ້ມີຫຼາຍທີ່ສຸດແຕ່ບໍ່ທຳລາຍສິ່ງແວດລ້ອມ.
4. ມີລັກສະນະທ້າທາຍ ແລະ ພະຈົນໄພ.
5. ຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນ.
6. ວິເຄາະແລກປ່ຽນສົນທະນາ.

## ສິ່ງທີ່ຄວນເອົາໃຈໃສ່ໃນການຈັດຄ້າຍ

1. ຄວາມປອດໄພຂອງຊາວຄ້າຍຕ້ອງ100%
2. ຫົວຂໍ້ຂອງຄ້າຍຕ້ອງເຫມາະກັບໄວອາຍຸຂອງຜູ້ເຂົ້າຮ່ວມ (ຊາວຄ້າຍ)
3. ຄ້າຍຫນຶ່ງບໍ່ຄວນເອົາຫລາຍຫົວຂໍ້ເກີນໄປ 1 - 2 ຫົວຂໍ້ກໍພໍແລ້ວ.
4. ສະຖານຕ້ອງມີລັກສະນະເຄິ່ງທຳມະຊາດບໍ່ເນັ້ນຄວາມສະດວກສະບາຍເກີນໄປບໍ່ຫ່າງຈາກຕົວເມືອງ, ໂຮງໝໍ, ຕະ ຫລາດ ແລະ ອື່ນໆເກີນໄປ.
5. ຄູເຝິກຕ້ອງແມ່ນຜູ້ທີ່ມີຄວາມຮູ້ສະເພາະດ້ານ ແລະ ຖືກກັບຫົວຂໍ້ຂອງຄ້າຍ.
6. ຢູ່ໃນຄ້າຍຄວນມີການວາງລະບຽບສຳເລັດແລ້ວຕ້ອງໄດ້ສະຫລຸບຖອດຖອນບົດຮຽນຮ່ວມກັນລະຫ່ວາງຜູ້ຈັດຄ້າຍ ແລະ ຊາວຄ້າຍຫລື ຄະນະຜູ້ຈັດຄ້າຍຮ່ວມກັນ.
7. ຢູ່ໃນຄ້າຍຄວນມີການຈັດຕັ້ງຄ້າຍໃຫ້ຊັດເຈນຖືກຕ້ອງຕາມໂຄງຮ່າງ.
8. ຊາວຄ້າຍອາຍຸຄວນໄດ້ສະເລ່ຍ(ບໍ່ເອົາເດັກນ້ອຍ-ຜູ້ໃຫຍ່ເຂົ້າຄ້າຍດຽວກັນ)
9. ອັດຕາສ່ວນຄູເຝິກ ແລະ ຄະນະຮັບຜິດຊອບ 01 ຕໍ່ຊາວຄ້າຍ 7-8 ຄົນສຳລັບຮຸ່ນນ້ອຍ ແລະ ຮຸ່ນໃຫຍ່ 10-12 ຄົນ ''ການປ່ຽນແປງຂອງຊາວຄ້າຍແຕ່ລະວັນແມ່ນຂະບວນການວິວັດ ແລະ ພັດ



+ <u>ບໍລິຫານຄ້າຍ:</u>
  - <u>ສ້ອມແປງ</u>:
  - ແມ່ນອຳນວຍຄວາມສະດວກແກ້ໄຂສິ່ງເປ່ເພພ້ອມທັງສ້ອມແປງຕ່າງໆພາຍໃນຄ້າຍ (ໄຟຟ້າ, ນ້ຳປະປາ ແລະ ອື່ນໆ).
  - ຜູ້ຮັບຜິດຊອບຄວນມີວິຊາສະເພາະດ້ານນີ້.
+ <u>ທະນາຄານຄ້າຍ</u>:
  - ມີໜ້າທີ່ເປັນບ່ອນຝາກຊັບສິນມີຄ່າ, ເງິນ, ຄຳຂອງຊາວຄ້າຍມີໄປຝາກ ແລະ ໃບຖອນຄັກແນ່ ແລະ ຕ້ອງຮັບປະກັນບໍ່ໃຫ້ເສຍຫາຍ.ທະນາຄານຄ້າຍຕ້ອງເປັນຄົນທີ່ສັດຊື່ ແລະ ມີຄວາມຮັບຜິດຊອບສູງ.
+ <u>ສຸຂະພິບານຄ້າຍ</u>:
  - ມີໜ້າທີ່ເປັນແພດປະຈຳຄ້າຍ (ຈ່າຍຢາປິ່ນປົວພະຍາດຂັ້ນພື້ນຖານ).
  - ກວດຢ້ຽມສະພາບການກິນນອນຂອງຊາວຄ້າຍ ແລະ ນຳສະເໜີໃຫ້ຜູ້ຮັບຜິດຊອບບໍລິຫານເພື່ອສະເໜີຕໍ່ຜູ້ອຳນວຍການຄ້າຍ
+ <u>ປຸງແຕ່ງອາຫານ</u>:

  ມີໜ້າທີ່ຈັດແຕ່ງອາຫານ, ອອກຕະຫລາດ,ແຕ່ງກິນໃຫ້ຊາວຄ້າຍ.
+ <u>ວັດຖຸ/ອຸປະກອນ</u>: ຈ່າຍວັດຖຸອຸປະກອນເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານວິຊາການ.
+ <u>ການເງິນຄ້າຍ</u>:

- ຮີມໂຮມການສະເໜີຊື້ວັດຖຸຕ່າງໆແລ້ວຂໍຄຳເຫັນນຳຜູ້ອຳນວຍການຄ້າຍສັ່ງຈ່າຍ.

2. <u>ໜ້າທີ່ຂອງແຕ່ລະພາກສ່ວນ</u>

+ <u>ທີ່ປືກສາຄ້າຍ:</u> ມີໜ້າທີ່ເບິ່ງລວມແຕ່ບໍ່ໄດ້ຂຶ້ນອົບຮົມໃຫ້ຄຳຊີ້ນຳ ແລະ ຂໍ້ຄິດເຫັນໃນຂະບວນການຂອງຄ້າຍ.

+ <u>ຜູ້ອຳນວຍການຄ້າຍ</u>: ມີໜ້າທີ່ຊີ້ນຳລວມວຽກງານທັງໝົດຂອງຄ້າຍແຕ່ຢ່າງໜ້ອຍຜູ້ອຳນວຍການຄ້າຍຕ້ອງໄດ້ຂຶ້ນອົບຮົມຢ່າງໜ້ອຍ 4h ໃນຄ້າຍໜຶ່ງເປັນຜູ້ສັງລວມຄຳສະເໜີຈາກ 2 ໜ່ວຍງານເພື່ອແກ້ໄຂບັນຫາ.

+ <u>ເງື່ອນໄຂຜູ້ທີ່ຈະເປັນອຳນວຍການຄ້າຍ</u>.

1. ຕ້ອງຮູ້ເລື່ອງການຈັດລະບົບຄ້າຍເປັນຢ່າງດີ.
2. ມີປະສົບການໃນການຈັດຄ້າຍບໍ່ຕໍ່າກວ່າ 2 ປີ.
3. ເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ເປັນທີ່ຍອມຮັບໃນຄະນະທີ່ຈັດຄ້າຍ (ເຮັດວຽກເປັນທີມດີ).
4. ໃຈກວ້າງ, ເປີດໂອກາດ, ວິໄສທັດກວ້າງໄກ.
5. ກົງໄປກົງມາມີເຫດມີຜົນ.

+ <u>ວິຊາການຄ້າຍ</u>:

- ມີໜ້າທີ່ຊີ້ນຳຄູເຝິກໃນການຈັດອົບຮົມ ແລະ ຮ່ວມກັບຄູເຝິກວາງແຜນ ແລະ ຈັດຕາຕະລາງອົບຮົມ (ວຽກງານວິຊາການຄ້າຍເປັນວຽກງານໜຶ່ງທີ່ຕັດສິນວ່າຈະຕ້ອງການໃຫ້ຊາວຄ້າຍອອກມາໃນລັກສະນະຮູບແບບໃດ).
- ຈັດກອງປະຊຸມຖອດຖອນບົດຮຽນພາຍໃນຄ້າຍ (ປະຊຸມໝູ່, ປະຊຸມລວມ)ນຳເອົາຂໍ້ສະເໜີ ແລະ ຂໍ້ຂັດແຍ່ງຕ່າງໆເພື່ອຂໍຄວາມເຫັນນຳຜູ້ອຳນວຍການຄ້າຍ.



ທະນາຊາວຄ້າຍເຊິ່ງຜູ້ຈັດຄ້າຍມືອາຊີບຄວນຮູ້ ແລະ ປັບປຸ່ງນກິດຈະກຳເພື່ອບັນລຸຈຸດປະສົງໂດຍການປັບປຸ່ງນກິດຈະກຳ ແລະ ວິທີການຂອງຕົວເອງ''.

## V. <u>ວິທີເຝິກທັກສະຂອງຄ້າຍ ອ.ຮ.ພ</u>

1. ການມັດເຊືອກໃນຮູບແບບຕ່າງໆເຊັ່ນ: ການຊ່ວຍຄົນຕົກຜາ,ຕໍ່ໄມ້, ບ້ວງຂ່າງ ແລະ ອື່ນໆ
2. ການປະດິດເຄື່ອງໃຊ້ພາຍໃນຄ້າຍເຊັ່ນ: ໄມ້ 3 ຂາເພື່ອທຸງເຂົ້າ, ຮ້ານມ້ຽນເຄື່ອງ, ບ່ອນລ້າງຖ້ວຍ, ບ່ອນຖິ້ມຂີ້ເຫຍື້ອ ແລະ ອື່ນໆ.
3. ການນຳໃຊ້ເຕັ້ນໃນການນອນ.
4. ການກໍ່ກອງໄຟປະກອບອາຫານ.
5. ການນຳໃຊ້ຫມໍ້ສະຫນາມເພື່ອປຸງແຕ່ງອາຫານ.
6. ການນຳໃຊ້ຂອງມີຄົມພາຍໃນຄ້າຍ.
7. ເຄື່ອງຫມາຍນຳຮອຍ.
8. ການກວດຢ້ຽມຄ້າຍ.

## VI. ລັກສະນະຂອງຄ້າຍ ອຣພ

1. ຄ້າຍກາງເວັນ (Day camp) ຮຸ່ນນ້ອຍ
2. ຄ້າຍພັກແຮມ (Camping) ຮຸ່ນກາງ ແລະ ຮຸ່ນໃຫຍ່






1. ໂຄງຮ່າງການຈັດຕັ້ງຄ້າຍ



ຄ້າຍທີ່ດີຕ້ອງປະກອບດ້ວຍຄວາມຮັກ ຄວາມອົບອຸ່ນທີ່ເຕັມໄປດ້ວຍຄວາມຮູ້ ຄວາມຜູກພັນ, ທ້າທາຍ ແລະ ໜ້າ ຄົ້ນຫາ



## ມາດຕະຖານທີ 1 :
## ການສ້າງສາຍສຳພັນ

ê ຄ້າຍ ອ.ຮ.ພ ຊາວຄ້າຍ.............

1. ເປັນຈຸດລວມສູນຂອງທຸກໆເລື່ອງ
2. ທຸກຄົນມີສິດ ແລະ ມີສັກສີເທົ່າທຽມກັນບໍ່ວ່າແຕ່ລະຄົນຈະເປັນໃຜ ແລະ ມາຈາກໃສ
3. ບໍ່ມີການຍົກເວັ້ນໃນເວລາປະຕິບັດ, ບໍ່ລະເມີດສິດທາງດ້ານ ຮ່າງກາຍ, ຈິດໃຈ ແລະ ອາລົມ
4. ທຸກໆຄົນຕ້ອງໄດ້ຍອມຮັບຄວາມແຕກຕ່າງຂອງແຕ່ລະຄົນ
5. ຕ້ອງເປີດໂອກາດໃຫ້ທຸກຄົນມີສ່ວນຮ່ວມຕາມໄວອາຍຸ

## ມາດຕະຖານທີ 2 : ການສ້າງຊາວຄ້າຍທີ່ດີ

1. ຄ້າຍ ອຣພ

ຕ້ອງມີເປົ້າຫມາຍທີ່ຊັດເຈນທີ່ຈະພັດທະນາຊາວຄ້າຍໃຫ້ມີຄວາມສົມດູນທາງດ້ານຮ່າງກາຍເຊິ່ງຫມາຍເຖິງ (ແຂງແຮງ)ມີທັດສະນະຄະຕິທີ່ດີໃນການເບິ່ງແຍງສຸຂະພາບອອກກຳລັງກາຍ ແລະ ຮັບປະທານອາຫານທີ່ດີມີປະໂຫຍດຕໍ່ຮ່າງກາຍທາງດ້ານຈິດໃຈ (ເອື້ອເຟື້ອເພື່ອແຜ່ໂອບເອື້ອອາລີມີຄວາມເມດຕາກາລຸນາເຫັນແກ່ປະໂຫຍດສ່ວນລວມ) ດ້ານສະຕິປັນຍາ (ຮູ້ຈັກຄິດ, ຮູ້ວິທີແກ້ໄຂບັນຫາ) ດ້ານອາລົມ (ເບີກບານຍິ້ມແຍ້ມແຈ່ມໃສຍອມຮັບກົດລະບຽບ) ດ້ານສັງຄົມ (ປັບຕົວເອງໄວ ແລະ ເຂົ້າກັບໝູ່ເພື່ອນໄດ້ດີ).

2. ເປົ້າໝາຍຂອງຄ້າຍຕ້ອງຊັດເຈນ ແລະຕ້ອງມີຄວາມເຊື່ອຖືວ່າຈະບັນລຸຕາມຈຸດປະສົງພ້ອມດຽວກັນຕ້ອງສາມາດປະເມີນຜົນໄດ້.



## ມາດຕະຖານທີ 7: ຂະບວນການຈັດຄ້າຍທີ່ດີຂອງ ອ.ຮ.ພ

1. ຂະບວນການດຳເນີນຄ້າຍແຕ່ລະວັນຖືໄດ້ວ່າເປັນເລື່ອງທີ່ສຳຄັນທີ່ທຸກໆພາກສ່ວນຕ້ອງໄດ້ໃສ່ໃຈເປັນພິເສດຕະຫຼອດເວລາ
2. ການບໍລິຫານຂອງຄ້າຍ ອ.ຮ.ພ ເປັນແບບສາຍກົງວພັນແຕ່ນ້ອຍຫາໃຫຍ່ (Bottom UP) ທຸກພາກສ່ວນຕ້ອງສະໜັບສະໜູນລະບົບວຽກງານພື້ນຖານຂອງຄ້າຍຄືຊາວຄ້າຍ ແລະ ຜູ້ນຳຄ້າຍ
3. ມີໂຄງສ້າງການບໍລິຫານຄ້າທີ່ຊັດເຈນມີການແບ່ງງານຕາມຄວາມເໝາະສົມ (Job Description) ຂອງແຕ່ລະໜ້າທີ່
4. ມີການປະຊຸມທຸກໆວັນຄັ້ງໜຶ່ງໃຊ້ເວລາ 30 – 45 ນາທີ ແລະ ມີການທົບທວນຄືນ (Feedback) ຄ້າຍລະ1 ຄັ້ງ
5. ມີລະບົບການຮັກສາຄວາມປອດໄພເປັນລາຍລັກອັກສອນໃນເລື່ອງການຮັບສົ່ງເດັກເຂົ້າ-ອອກຄ້າຍ, ການໄປທັດສະນະສຶກສາ, ການເຂົ້າຮ່ວມກິດຈະກຳທາງນ້ຳ, ກິດຈະກຳເດີນປ່າ...

## ມາດຕາຖານທີ 6:
## ກິດຈະກຳທີ່ດີຂອງຄ້າຍ ອ.ຮ.ພ

1. ກິດຈະກຳເປັນພຽງ < ສີ່ > ທີ່ເຮັດໃຫ້ເປົ້າໝາຍສຳເລັດຜົນ
2. ກິດຈະກຳຂອງຄ້າຍຕ້ອງຫຼາກຫຼາຍເໝາະສົມກັບຊາວຄ້າຍ ຄຳນຶງເຖິງຄວາມແຕກຕ່າງຂອງບຸກຄົນ, ທຸກຄົນມີສ່ວນຮ່ວມ, ສະໜຸກສະໜານ ແລະປອດໄພ100% (ໂດຍຖືເອົາ 5 ສໍເປັນຫຼັກໃນການດຳເນີນກິດຈະກຳ)
3. ການຈັດກິດຈະກຳຕ້ອງໃຫ້ຊາວຄ້າຍມີສ່ວນຮ່ວມໃນຂະບວນການການຄົ້ນຄິດ ແລະ ການຕັດສິນໃຈຕາມໄວອາຍຸ.
4. ກິດຈະກຳຕ້ອງສ້າງປະສົບການຈາກກຸ່ມຂະໜາດນ້ອຍ, ກາງ, ໃຫຍ່ ຈະຕ້ອງມີຄວາມສົມດູນທາງກິດຈະກຳກາງແຈ້ງ ແລະ ໃນຮົ່ມ.



## ມາດຕະຖານທີ 3:
## ການສ້າງກຸ່ມທີ່ດີ

1. ຄ້າຍ ອ.ຮ.ພ ໃຊ້ຂະບວນການເຮັດວຽກຂອງກຸ່ມເປັນຫຼັກໃນການເຮັດວຽກຂອງຄ້າຍ(ໃນທຸກລະດັບຄ້າຍ)ຜູ້ນຳຄ້າຍທຸກຄົນຕ້ອງເອົາໃຈໃສຕິດຕາມຂະບວນການປ່ຽນຂອງກຸ່ມຢ່າງຊັດເຈນເພາະຈະສາມາດນຳໄປໃຊ້ເປັນເຄື່ອງມືໃນການພັດທະນາຊາວຄ້າຍຮອບດ້ານ.
2. ການແບ່ງກຸ່ມດ້ວຍຫຼາຍວິທີຫຼາຍຮູບໂດຍໃຊ້ເຕັກນິກທີ່ເໝາະສົມໃນການແບ່ງກຸ່ມໂດຍບໍ່ໃຫ້ຊາວຄ້າຍຮູ້ສຶກວ່າຕົນເອງຖືກເລືອກປະຕິບັດ.
3. ການພັດທະນາກຸ່ມໄປໃຫ້ເຖິງລະດັບກຸ່ມທີ່ມີຄວາມເຊື່ອໝັ້ນ ແລະໄວ້ວາງໃຈກັນຕະຫຼອດເຖິງຄວາມສຳພັນອັນແໜ້ນແຟ້ນຂອງກຸ່ມ (Inter dependence)ເປັນເປົ້າໝາຍຂອງຜູ້ນຳຄ້າຍ ແລະ ເຈົ້າໜ້າທີ່ຄ້າຍທຸກຄົນເພິ່ງປາດຖະໜາຢາກໄດ້.
4. ການເຮັດວຽກເປັນກຸ່ມເປັນທີມ (Teamwork) ຖືເປັນສຳຄັນ ແລະ ເປັນຫຼັກການເຮັດວຽກຂອງຄ້າຍ ອ.ຮ.ພ.

## ມາດຖານທີ 4:
## ການເປັນຜູ້ນຳທີ່ດີ

1. ຜູ້ນຳຄ້າຍ ອ.ຣ.ພ ທຸກຄົນຕ້ອງຜ່ານການຄັດເລືອກ ແລະ ເຂົ້າຮ່ວມອົບຮົມຫຼັກສູດຜູ້ນຳຄ້າຍເປັນເວລາ 4 ວັນ.
2. ຜູ້ນຳຄ້າຍ ອ.ຣ.ພ ຈະຕ້ອງຄຳນຶງສະເໝີວ່າຕົນເອງມີພຶດຕິກຳຕໍ່ການປ່ຽນພຶດຕິກຳຂອງຊາວຄ້າຍ(ປຽບເໝືອນແສງຟ້າຜ່າທີ່ເຕັມໄປດ້ວຍພະລັງແຫ່ງຄວາມດີ ພະລັງແຫ່ງຄວາມຮັກທີ່ພ້ອມຈະຜ່າແສງຕົນເອງໄປຫາຊາວຄ້າຍເພື່ອໃຫ້ເກີດການປ່ຽນແປງໄປໃນທາງທີ່ດີງາມ)
3. ຄ້າຍ ອ.ຣ.ພ ມີຜູ້ນຳ 1 ຄົນຕໍ່ເດັກສູງສຸດ 10 – 12 ຄົນຫຼື 14 ຄົນ (ຮຸ່ນກາງ ແລະ ຮຸ່ນໃຫຍ່ )
4. ລັກສະນະຜູ້ນຳຄ້າຍ ອ.ຣ.ພ ຕ້ອງມີມະນຸດສຳພັນດີ, ຮັບຜິດຊອບຕໍ່ໜ້າທີ່ມີຄວາມເຊື່ອໝັ້ນ, ມີແນວຄິດສ້າງສັນ, ແກ້ໄຂສະເພາະໜ້າໄດ້ດີ, ອົດທົນ, ເສຍສະຫຼະອາລົມລ່າເລີງແຈ່ມໃສ, ມີຄວາມຮັກໃຫ້ທຸກຄົນ, ສັດຊື່ແລະຍອມຮັບຟັງຄຳຄິດເຫັນຂອງຄົນອື່ນ.



## ມາດຕະຖານທີ 5:
## ຮູບແບບການຈັດຄ້າຍ

1. ຮູບແບບຄ້າຍ ອ.ຣ.ພ ໂດຍລວມມີ 2 ຮູບແບບຄື: ຄ້າຍກາງເວັນ ແລະຄ້າຍພັກແຮມ.
2. ສະພາບລວມຂອງຄ້າຍ ອຣພ ໂດຍລວມຕ້ອງມີຄວາມສົມດູນກັນລະຫວ່າງທຳມະຊາດ ແລະອາຄານສະຖານທີ່ບໍ່ວ່າຈະເປັນຄ້າຍກາງເວັນຢູ່ໃນເມືອງກໍຕາມ ຄ້າຍ ອຣພ ຈະໃຊ້ຮູບແບບຄວາມເປັນຢູ່ບໍ່ເນັ້ນໜັກທາງດ້ານຄວາມສຸກສະບາຍເກີນໄປແຕ່ຈະເນັ້ນໜັກການຮຽນຮູ້ທີ່ສົມບູນຮອບດ້ານຂອງຊາວຄ້າຍ.
3. ມີການສ້າງຂໍ້ຕົກລົງຮ່ວມກັນ ມີກົດກະຕິການາລະຍາດໃນການຢູ່ຮ່ວມກັນເປັນລາຍລັກອັກສອນຕັ້ງແຕ່ວັນທຳອິດຂອງການເຂົ້າຄ້າຍ.
4. ມີເວລາປະຕິບັດປະຈຳວັນຂອງຄ້າຍ ອ.ຣ.ພ ຈະເນັ້ນເລື່ອງຄວາມສົມດູນຂອງໄລຍະເວລາສ່ວນຕົວ, ເວລາປະຕິບັດກິດຈະກຳ ແລະ ເວລາຫວ່າງ.